# ທາງລົດໄຟ ເສິງຕູ່ - ຄຸນໝິງ ສາຍໃໝ່ ເຮັດໃຫ້ນະຄອນເສິງຕູ່ ແລະ ນະຄອນຈິງກິ່ງ ກັບ ປະເທດລາວ ມີໄລຍະທາງໃກ້ເຂົ້າກັນ



ວັນທີ 26 ທັນວາ 2022, ທາງລົດໄຟເສິງຕູ່-ຄຸນໝິງສາຍໃໝ່ທີ່ມີຄວາມຍາວທັງໝົດ 915 ກິໂລແມັດ ໄດ້ສຳເລັດການກໍ່ສ້າງ ແລະ ເປີດນຳໃຊ້. ທາງລົດໄຟເສິງຕູ່ - ຄຸນໝິງສາຍໃໝ່ໄດ້ເຊື່ອມຕໍ່ນະຄອນເສິງຕູ່ແຂວງເສສວນກັບນະຄອນຄຸນໝິງແຂວງຢຸນນານ, ຄວາມໄວການອອກແບບແມ່ນ 160 ກິໂລແມັດຕໍ່ຊົ່ວໂມງ, ຊຶ່ງເປັນພາກສ່ວນປະກອບທາງລົດໄຟສຳຄັນທີ່ເຊື່ອມຕໍ່ພາກຕາເວັນຕົກສ່ຽງໃຕ້ຂອງຈີນກັບບັນດາປະເທດອາຊຽນ.

ທ່ານ Wang Hai ຮອງຜູ້ອຳນວຍການໃຫຍ່ ບໍລິສັດເອເລັກໂຕຼນິກ ຂາງເຈຍ ເສິງຕູ່ຈຳກັດ ກ່າວວ່າ: ເປົ້າໝາຍຂອງບໍລິສັດພວກເຮົາ ແມ່ນອວ່າຍໜ້າໄປສູ່ຕະຫຼາດປະເທດທີ່ລຽບຕາມ “ໜຶ່ງແລວ ໜຶ່ງເສັ້ນທາງ” ແລະ ຕະຫຼາດອາຊີຕາເວັນອອກສ່ຽງໃຕ້. ການເປີດນຳໃຊ້ທາງລົດໄຟ ນະຄອນເສິງຕູ່ - ນະຄອນຄຸນໝິງສາຍໃໝ່ເຮັດໃຫ້ຕົ້ນທຶນການຂົນສົ່ງສິນຄ້າໄປປະເທດອາຊີຕາເວັນອອກສ່ຽງໃຕ້ໄດ້ຫຼຸດລົງ, ການພົວພັນຮ່ວມມືລະຫວ່າງພວກເຮົາ ກັບ ຄູ່ຮ່ວມມືໃນປະເທດລາວ ຈະນັບມື້ນັບແໜ້ນແຟ້ນຂຶ້ນ.

ພາຍຫຼັງທາງລົດໄຟເສິງຕູ່ - ຄຸນໝິງສາຍໃໝ່ ໄດ້ເປີດການນຳໃຊ້ແລ້ວ, ຈະເຊື່ອມຕໍ່ກັບທາງລົດໄຟລາວ-ຈີນ, ທາງລົດໄຟໂດຍສານຢຸນນານ - ກວາງຊີ, ທາງລົດໄຟຄວາມໄວສູງຊຽງໄຮ - ຄຸນໝິງ. ພາກສ່ວນກ່ຽວຂ້ອງຂອງທາງລົດໄຟຈີນໄດ້ເປີດການນຳໃຊ້ຂະບວນລົດໄຟທີ່ເຊື່ອມຕໍ່ ທາງລົດໄຟນະຄອນເສິງຕູ່-ນະຄອນຄຸນໝິງສາຍໃໝ່ ກັບທາງລົດໄຟລາວ-ຈີນ, ເຮັດໃຫ້ຜູ້ໂດຍສານຂອງນະຄອນເສິງຕູ່ແຂວງເສສວນສາມາດຂີ່ລົດໄຟໄປຮອດກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາ ທີ່ຕັ້ງຢູ່ພາກໃຕ້ຂອງແຂວງຢຸນນານພາຍໃນມື້ດຽວ.

ຢູ່ສະຖານີລົດໄຟສາກົນເສິງຕູ່, ມີຂະບວນລົດໄຟຂະບວນໜຶ່ງກຳລັງກຽມພ້ອມຈະອອກເດີນທາງໄປສູ່ປະເທດລາວ. ສິນຄ້າທີ່ບັນທຸກໃນຕູ້ລົດໄຟມີສຸຂະພັນ, ກະໂລ, ວັດຖຸທົນ ແລະ ເຄື່ອງໄຟຟ້າເປັນຕົ້ນ, ເປັນວັດຖຸການຕົບແຕ່ງຂອງໂຮງແຮມຈຳນວນໜຶ່ງຂອງນະຄອນຫຼວງວຽງຈັນທີ່ຊື້ຈາກນະຄອນເສິງຕູ່. ທາງລົດໄຟເສິງຕູ່ - ຄຸນໝິງສາຍໃໝ່ໄດ້ເຊື່ອມຕໍ່ ກັບທາງລົດໄຟລາວ-ຈີນ ຢູ່ທິດໃຕ້, ໄດ້ເຮັດໃຫ້ນະຄອນເສິງຕູ່ ແລະ ນະຄອນຈິງກິ່ງກັບປະເທດລາວມີໄລຍະທາງໃກ້ເຂົ້າກັນ.

ທຸກມື້ນີ້ມີຜະລິດຕະພັນລາງເຫຼັກ 3.000 ກວ່າໂຕນຖືກຂົນສົ່ງອອກຈາກນະຄອນພັນຈືຮວາຂອງແຂວງເສສວນໂດຍຜ່ານທາງລົດໄຟ, ໃນນັ້ນມີຈຳນວນໜຶ່ງແມ່ນໄດ້ປູຢູ່ຕາມທາງລົດໄຟລາວ - ຈີນ ແລະ ທາງລົດໄຟຈາກາຕາ - ບັນດຸງ. ທ່ານ Lv Panfeng ຫົວໜ້າ ຫ້ອງການເຕັກນິກການຜະລິດ ໂຮງງານຜະລິດລາງເຫຼັກ ຂອງກຸ່ມບໍລິສັດເຫຼັກກ້າ ພັນຈືຮວາ ກ່າວວ່າ: ແຕ່ກ່ອນຕ້ອງຕັດລາງເຫຼັກທີ່ຍາວ 100 ແມັດໃຫ້ເປັນລາງ 50 ແມັດ ແລ້ວຂົນຂຶ້ນກຳປັ່ນແລ້ວຂົນສົ່ງທາງທະເລ, ປັດຈຸບັນນີ້ ໂດຍຜ່ານທາງລົດໄຟເສິງຕູ່ - ຄຸນໝິງສາຍໃໝ່ ແລະທາງລົດໄຟລາວ-ຈີນ, ລາງເຫຼັກທີ່ຍາວ 100 ແມັດບໍ່ຕ້ອງຕັດອີກແລ້ວ.

“ທາງລົດໄຟເສິງຕູ່ - ຄຸນໝິງສາຍໃໝ່ໄດ້ເຊື່ອມຕໍ່ກັບຂຸມທາງລົດໄຟເສິງຕູ່ ທີ່ມີຂະບວນລົດໄຟຈີນ - ເອີຣົບຢູ່ທາງທິດເໜືອ, ທິດໃຕ້ໄດ້ຜ່ານຂຸມທາງລົດໄຟຄຸນໝິງເຊື່ອມຕໍ່ກັບທາງລົດໄຟລາວ-ຈີນ.” ທ່ານ Tang Xuqiang ສາດສະດາຈານ ມະຫາວິທະຍາໄລການເງິນ ແລະ ເສດຖະກິດ ພາກຕາເວັນຕົກສ່ຽງໃຕ້ຂອງຈີນ ກ່າວວ່າ: ການເປີດນຳໃຊ້ ທາງລົດໄຟເສິງຕູ່ - ຄຸນໝິງສາຍໃໝ່ຢ່າງຮອບດ້ານຈະຊຸກຍູ້ການເປີດປະຕູສູ່ພາຍນອກທີ່ມີລະດັບສູງຂອງພາກຕາເວັນຕົກສ່ຽງໃຕ້ ຂອງຈີນຢ່າງແຂງແຮງ.

(ຂ່າວ: ສຳນັກຂ່າວສານຊິນຮວາ)

# ມາຮຽນຢູ່ຈີນ ເປັນໂອກາດທີ່ດີອັນໜຶ່ງ

ທ້າວ ເສິງຊຽງເຕີ ປີນີ້ອາຍຸ 25 ປີ ມາຈາກແຂວງຈຳປະສັກ ສປປ ລາວ, ໃນນາມທີ່ເປັນນັກຮຽນລາວຊຸດທຳອິດທີ່ເດີນທາງມາຮອດນະຄອນຄຸນໝິງ, ເດືອນມີນາ 2022, ທ້າວ ເສິງຊຽງເຕີ ໄດ້ເລີ່ມຕົ້ນຊີວິດການຮຽນຢູ່ຈີນ ໃນວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງ.

ທ້າວ ເສິງຊຽງເຕີ ກ່າວວ່າ: ເວົ້າສຳລັບຂ້ອຍແລ້ວ, ມາຮຽນຢູ່ຈີນ ເປັນໂອກາດທີ່ດີອັນໜຶ່ງ, ຄວາມຮູ້ທີ່ພວກເຮົາຮຽນນັ້ນແມ່ນກ່ຽວກັບທາງລົດໄຟ, ໄປຄຽງຄູ່ກັບການເປີດນຳໃຊ້ທາງລົດໄຟລາວ-ຈີນ, ຫຼັງຈາກນີ້ອີກ 2 ປີທີ່ຂ້ອຍຮຽນຈົບແລ້ວ, ຂ້ອຍກໍສາມາດກັບຄືນປະເທດລາວ ແລະ ຖ່າຍທອດຄວາມຮູ້ທີ່ໄດ້ຮຽນມານັ້ນໃຫ້ແກ່ນັກຮຽນລາວຫຼາຍກວ່າເກົ່າ. ເຖິງແມ່ນວ່າພວກເຮົາຈະຄິດຮອດຄິດເຖິງບ້ານເກີດເມືອງນອນເລື້ອຍໆກໍຕາມ, ແຕ່ເພື່ອການພັດທະນາໃນອະນາຄົດ, ຄວາມອິດທົນທຸກຢ່າງລ້ວນແຕ່ຄຸ້ມຄ່າຫຼາຍ.

ທ້າວ ເສິງຊຽງເຕີ ກ່າວຕື່ມວ່າ: ໃນໄລຍະການຮຽນຫຼາຍເດືອນມານີ້, ຂ້ອຍໄດ້ຮຽນວິຊາສະເພາະດ້ານທາງລົດໄຟຫຼາຍຢ່າງ, ໃນຂະນະດຽວກັນນັ້ນກໍໄດ້ມີໝູ່ຄົນຈີນຫຼາຍຄົນ, ພາສາຈີນກໍໄດ້ມີຄວາມກ້າວໜ້າຫຼາຍ. ພາຍຫຼັງກັບຄືນປະເທດລາວແລ້ວ, ຂ້ອຍຈະແນະນຳໝູ່ເພື່ອນ ແລະ ເພື່ອນຮ່ວມງານຢູ່ອ້ອມຂ້າງ ມາທ່ຽວນະຄອນຄຸນໝິງ, ມາຮຽນຕໍ່ຢູ່ວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງ.ຫວັງວ່າຫຼັງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໝົດສິ້ນໄປແລ້ວ, ຈະສາມາດພາຄອບຄົວມາທ່ຽວຄຸນໝິງນຳກັນ.

(ຂ່າວ: “ໜັງສືພິມປະຊາຊົນລາຍວັນ” ຂອງຈີນ)

# ຈີນຈະປະຕິບັດມາດຕະການຊົ່ວຄາວ ສຳລັບການໄປມາຫາສູ່ຂອງຄົນຈີນ ແລະ ຕ່າງປະເທດ ນັບແຕ່ວັນທີ 8 ມັງກອນ 2023 ເປັນຕົ້ນໄປ

ທີມງານພົວພັນຕ່າງປະເທດ ຂອງກົນໄກຮັບມືກັບການປ້ອງການ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ຂອງຄະນະລັດຖະບານຈີນ ໄດ້ອອກແຈ້ງການກ່ຽວກັບ“ມາດຕະການຊົ່ວຄາວສຳລັບການໄປມາຫາສູ່ຂອງຄົນຈີນ ແລະ ຕ່າງປະເທດ” ໃນຫວ່າງມໍ່ໆມານີ້, ມາດຕະການທີ່ກ່ຽວຂ້ອງຈະເລີ່ມຜົນບັງຄັບໃຊ້ ແຕ່ວັນທີ 8 ມັງກອນປີ 2023 ເປັນຕົ້ນໄປ.

ຕາມແຈ້ງການດັ່ງກ່າວໃຫ້ຮູ້ວ່າ, ບຸກຄົນທີ່ເຂົ້າມາຈີນຄວນໄດ້ຮັບການກວດຫາເຊື້ອພະຍາດພາຍໃນ 48 ຊົ່ວໂມງກ່ອນອອກເດີນທາງ, ຜູ້ທີ່ມີຜົນກວດເປັນລົບສາມາດເດີນທາງເຂົ້າມາຈີນໄດ້, ບໍ່ຕ້ອງຮ້ອງຂໍ QR Code ສຸຂະພາບນຳສະຖານທູດ ຫຼື ສະຖານກົງສຸນຈີນທີ່ປະຈຳຕ່າງປະເທດ, ຂໍພຽງແຕ່ຊຽນຜົນລົບເຂົ້າຟອມແຈ້ງສຸຂະພາບຕາມດ່ານເຂົ້າ-ອອກເມືອງເທົ່ານັ້ນ. ຖ້າເປັນຜົນບວກ, ບຸກຄົນທີ່ກ່ຽວຂ້ອງຄວນເຂົ້າມາປະເທດຈີນ ພາຍຫຼັງຜົນກວດກາຍເປັນລົບ.

ໃນດ້ານການກວດກາປ້ອງກັນພະຍາດເຂົ້າເມືອງ, ຈີນຈະຍົກເລີກການກວດຫາເຊື້ອພະຍາດສຳລັບຄົນທີ່ເຂົ້າມາຈີນ. ຜູ້ທີ່ມີໃບຢັ້ງຢືນສຸຂະພາບເປັນປົກກະຕິ ແລະ ບໍ່ມີສິ່ງຜິດປົກກະຕິໃນການກວດຫາເຊື້ອ ຢູ່ຕາມດ່ານເຂົ້າ-ອອກເມືອງ, ຈະສາມາດປ່ອຍຕົວເຂົ້າສູ່ສັງຄົມຈີນໄດ້. ຖ້າການແຈ້ງສຸຂະພາບມີອາການຜິດປົກກະຕິ ຫຼື ຄີງຮ້ອນ ແລະ ມີອາການອື່ນໆ, ຈະມອບໃຫ້ດ່ານເຂົ້າ-ອອກເມືອງກວດຫາເຊື້ອພະຍາດ. ຖ້າເປັນຜົນບວກ, ຜູ້ຕິດເຊື້ອພະຍາດໂຄວິດ-19 ທີ່ບໍ່ມີອາການ ຫຼືເປັນອາການເບົາພ້ອມທັງບໍ່ມີພະຍາດຕິດຕົວ, ສາມາດກັກບໍລິເວນຢູ່ເຮືອນ, ສະຖານທີ່ພັກເຊົາເພື່ອກັກບໍລິເວນດ້ວຍຕົນເອງ, ຖ້າມີສະພາບອື່ນ, ຄວນໄປປິ່ນປົວຢູ່ໂຮງໝໍໂດຍໄວ. ຖ້າເປັນຜົນລົບ, ດ່ານເຂົ້າ-ອອກເມືອງຈະປະຕິບັດການກວດຫາເຊື້ອພະຍາດແບບປົກກະຕິ ໂດຍອີງຕາມ “ກົດໝາຍວ່າດ້ວຍການກວດເຊື້ອພະຍາດ ແລະ ສຸຂະພາບສຳລັບຄົນເຂົ້າເມືອງ” ແລະ ກົດໝາຍກົດລະບຽບອື່ນໆຂອງຈີນ.

ໃນດ້ານຖ້ຽວບິນສາກົນ, ຈີນຍົກເລີກມາດຕະການຄຸ້ມຄອງ ແລະ ຄວບຄຸມຈຳນວນຖ້ຽວບິນຂອງຜູ້ໂດຍສານສາກົນ, ຈະເພີ່ມຈຳນວນຖ້ຽວບິນແບບແບ່ງເປັນໄລຍະ, ແລະ ປັບປຸງສະພາບແຈກຢາຍຂອງຖ້ຽວບິນໃຫ້ດີຂຶ້ນ. ນອກນັ້ນ, ຈີນຍັງຈະສັບຊ້ອນ ແລະ ປັບປຸງນະໂຍບາຍວີຊາ, ການດຳເນີນງານຂອງດ່ານເຂົ້າ - ອອກເມືອງ, ການທ່ອງທ່ຽວເຂົ້າ-ອອກເມືອງໃຫ້ສົມບູນຂຶ້ນ.

(ຂ່າວ: ສຳນັກຂ່າວສານຊິນຮວາ)

# ການຮ່ວມກັນກໍ່ສ້າງ “ໜຶ່ງແລວ ໜຶ່ງເສັ້ນທາງ” ໄດ້ສະແດງໃຫ້ເຫັນເຖິງສະຕິປັນຍາ ແລະ ຄວາມໂອບເອື້ອອາລີຂອງຈີນ

ທ່ານ Nasser Bouchiba ປະທານສະມາຄົມການຮ່ວມມື ແລະ ການພັດທະນາລະຫວ່າງອາຟຣິກາ ກັບ ຈີນ ປະເທດມາລົກ ກ່າວວ່າ: ຂ້າພະເຈົ້າມີຄວາມປະທັບໃຈຢ່າງເລິກເຊິ່ງຕໍ່ ບາງເນື້ອໃນໃນບົດລາຍງານຂອງກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຄັ້ງທີ 20 ຂອງພັກກອມມູນິດຈີນ, ເຊັ່ນ: ພັກກອມມູນິດຈີນໄດ້ຊຸກຍູ້ ແລະ ເປີດກວ້າງຄວາມທັນສະໄໝແບບຈີນຢ່າງສຳເລັດຜົນ, ໄດ້ສຳເລັດພາລະໜ້າທີ່ປະຫວັດສາດ ໃນດ້ານການລຶບລ້າງຄວາມທຸກຍາກ ແລະ ສ້າງສັງຄົມຢູ່ດີກິນດີໃຫ້ສຳເລັດຢ່າງຮອບດ້ານ,ໄດ້ຊຸກຍູ້ຮ່ວມກັນສ້າງ “ໜຶ່ງແລວ ໜຶ່ງເສັ້ນທາງ” ທີ່ມີຄຸນນະພາບສູງເປັນຕົ້ນ.

ປີ 1995 ຂ້າພະເຈົ້າໄດ້ມາຮຽນຢູ່ປະເທດຈີນ, ໄດ້ດຳລົງຊີວິດ ແລະ ຮ່ຳຮຽນຢູ່ນະຄອນຫຼວງປັກກິ່ງ, ນະຄອນຊຽງໄຮ, ນະຄອນກວາງໂຈ່ວ, ນະຄອນເສິນເຈິ້ນ ເປັນຕົ້ນ ເປັນເວລາ 20 ປາຍປີ, ຂ້າພະເຈົ້າໄດ້ສຳຜັດການປ່ຽນແປງ ແລະ ການພັດທະນາຢ່າງໄວວາຂອງຈີນ. ພັກກອມມູນິດຈີນ ໄດ້ສາມັກຄີ ແລະ ນຳພາປະຊາຊົນຈີນ ສຳເລັດພາລະໜ້າທີ່ ປະຫວັດສາດໃນດ້ານການລຶບລ້າງຄວາມທຸກຍາກ ແລະ ສ້າງສັງຄົມຢູ່ດີກິນດີໃຫ້ສຳເລັດຢ່າງຮອບດ້ານ, ໄດ້ບັນລຸເປົ້າໝາຍສູ້ຊົນ 100 ປີ ປະການທີໜຶ່ງ, ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນພາລະກິດຫຼຸດຜ່ອນຄວາມທຸກຍາກຂອງມວນມະນຸດ.

ການຮ່ວມກັນສ້າງ “ໜຶ່ງແລວ ໜຶ່ງເສັ້ນທາງ” ໄດ້ສະແດງໃຫ້ເຫັນເຖິງສະຕິປັນຍາ ແລະ ຄວາມໂອບເອື້ອອາລີຂອງຈີນ. ຈີນໄດ້ສະເໜີການຮ່ວມກັນສ້າງຂໍ້ລິເລີ່ມ “ໜຶ່ງແລວ ໜຶ່ງເສັ້ນທາງ” ອອກມາ, ຊຶ່ງໄດ້ສ່ອງແສງໃຫ້ເຫັນເຖິງຈີນໄດ້ປະຕິບັດຍຸດທະສາດເປີດປະຕູສູ່ພາຍນອກທີ່ຕັ້ງໜ້າກວ່າເກົ່າ ແລະ ເປັນເຈົ້າການກວ່າເກົ່າ, ພ້ອມທັງໄດ້ສະແດງໃຫ້ເຫັນວ່າ, ຈີນເປັນປະເທດໃຫຍ່ທີ່ມີນ້ຳໃຈຮັບຜິດຊອບ ທີ່ໄດ້ປະຕິບັດລັດທິຫຼາຍຝ່າຍຢ່າງແທ້ຈິງ. ຕະຫຼອດ 9 ປີຜ່ານມານີ້, ຈີນໄດ້ຕັ້ງໜ້າຊ່ວຍປະເທດທີ່ເຂົ້າຮ່ວມສ້າງ “ໜຶ່ງແລວ ໜຶ່ງເສັ້ນທາງ” ຮ່ວມກັນ ໃນການກໍ່ສ້າງພື້ນຖານໂຄງລ່າງ, ຍົກລະດັບອຸດສາຫະກຳການຜະລິດ ແລະ ປັບປຸງລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ປັດຈຸບັນນີ້, ການຮ່ວມກັນສ້າງ “ໜຶ່ງແລວ ໜຶ່ງເສັ້ນທາງ” ໄດ້ກາຍເປັນຜະລິດຕະພັນສາທາລະນະສາກົນ ແລະ ເວທີການຮ່ວມມືສາກົນ ທີ່ໄດ້ຮັບຄວາມນິຍົມຊົມຊອບຫຼາຍ. ໃນຊຸມປີມໍ່ໆມານີ້, ຈີນຍັງໄດ້ຈັດງານວາງສະແດງນຳເຂົ້າສິນຄ້າສາກົນຈີນ, ງານວາງສະແດງການຄ້າການບໍລິການສາກົນຈີນ, ງານວາງສະແດງອຸປະໂພກບໍລິໂພກສາກົນຈີນ ແລະ ເວທີຕ່າງໆ, ເພື່ອເປັນເຈົ້າການແບ່ງປັນໂອກາດອັນມະຫາສານຂອງຕະຫຼາດຈີນ.

ຂ່າວ: “ໜັງສືພິມປະຊາຊົນລາຍວັນ” ຂອງຈີນ(ຊຽນໂດຍ: ທ່ານ Nasser Bouchiba ປະທານສະມາຄົມການຮ່ວມມື ແລະ ການພັດທະນາລະຫວ່າງອາຟຣິກາ ກັບ ຈີນ ປະເທດມາລົກ)

# ຜົນງານການຄົ້ນຄວ້າຂອງແຂວງຢຸນນານ ຖືກຈັດເຂົ້າໃນບັນຊີ “ການບຸກທະລຸດ້ານວິທະຍາສາດ 10 ລາຍການ ປີ 2022” ຂອງວາລະສານ science

ວັນທີ 16 ທັນວາ 2022, ວາລະສານ Science ຂອງອາເມຣິກາໄດ້ເຜີຍແຜ່ ລາຍຊື່ການບຸກທະລຸດ້ານວິທະຍາສາດ 10 ລາຍການ ປີ 2022. ໃນນັ້ນ, ຜົນງານການຄົ້ນຄວ້າເຂົ້າປູກເທື່ອດຽວແຕ່ເກັບກ່ຽວ ໄດ້ຫຼາຍປີຂອງ ທີມງານທີ່ນຳພາໂດຍທ່ານ Hu Fengyi ຈາກຄະນະຄົ້ນຄ້າຊັບພະຍາກອນພືດ ມະຫາວິທະຍາໄລຢຸນນານ ຖືກຈັດເຂົ້າໃນບັນຊີດັ່ງກ່າວ ກໍຄື ເຂົ້າປູກງ່າຍ ແລະ ປູກເທື່ອດຽວເກັບກ່ຽວໄດ້ຫຼາຍປີ.

ຕາມລາຍງານຂ່າວໃຫ້ຮູ້ວ່າ, ເຂົ້າປູກເທື່ອດຽວເກັບກ່ຽວໄດ້ຫຼາຍປີ(PR23) ທີ່ທີມງານນຳພາໂດຍທ່ານ Hu Fengyi ຈາກມະຫາວິທະຍາໄລຢຸນນານນັ້ນ ປູກເທື່ອດຽວສາມາດເກັບກ່ຽວໄດ້ 3 ຫາ 4 ປີ ໂດຍບໍ່ຕ້ອງຫວ່ານປູກໃໝ່, ປີໜຶ່ງສາມາດເກັບກ່ຽວໄດ້ 2 ເທື່ອ, ຜົນຜະລິດສະເລ່ຍໃນການເກັບກ່ຽວເທື່ອໜຶ່ງມີເຖິງ 6,8 ໂຕນ/ເຮັກຕາ, ຜົນຜະລິດ (6,8 ໂຕນ/ເຮັກຕາ)ເທົ່າກັບແນວພັນເຂົ້າປູກປີດຽວ. ໃນໄລຍະການປູກ, ນັບແຕ່ປີທີສອງເປັນຕົ້ນໄປ, ພຽງແຕ່ຕ້ອງການສອງຂັ້ນຕອນ ຄື: ບົວລະບັດຮັກສາ ແລະ ເກັບກ່ຽວເທົ່ານັ້ນ, ເປັນວິທີການປູກເຂົ້າທີ່ລຽບງ່າຍ, ແບບສີຂຽວ ແລະ ແບບຍືນຍົງໜຶ່ງ.

(ຂ່າວ: “ໜັງສືພິມລາຍວັນຢຸນນານ” ເວັບໄຊ “ໜັງສືພິມປະຊາຊົນລາຍວັນ” ຂອງຈີນ)

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com